# ການປ່ຽນ
# ແປງຊີວິດ

ຢູ່ທີ່ພະແນກບໍຣິການຊຸມນຸມຊົນຂອງກົມສັງຄົມສົງເຄາະແລະສາທາຣະນະສຸກພວກເຮົາປ່ຽນແປງຊີວິດໂດຍການເຮັດໃຫ້ແນ່ໃຈວ່າບຸກຄົນແລະຄອບຄົວມີການເຂົ້າເຖິງເຄື່ອງມືທີ່ພວກເຮົາທຸກໆຄົນຕ້ອງການເພື່ອຈະເຮັດໃຫ້ສຳເຣັດຜົນ.ພວກເຮົາຮັບໃຊ້ປະຊາຊົນຣັດວໍຊິງຕັນຜູ້ທີ່ດຳຣົງຊີວິດຢູ່ໃນຂອບເຂດ.ເຖິງແມ່ນວ່າຄົນສ່ວນຫລາຍບໍ່ໄດ້ຮັບເງິນສົດຊ່ວຍເຫລືອ,ເຂົາເຈົ້າອາດຈະຫວັງເພິ່ງໃສ່ການຊ່ວຍເຫລືອອາຫານ,ການບໍຣິການອູ້ມຊູທີ່ກ່ຽວພັນນຳວຽກງານ,ແລະການຊ່ວຍເຫລືອນຳເງິນລ້ຽງລູກ,ການຄຸ້ມກັນພະຍາບານຫລືເງິນຈ່າຍຊ່ວຍຄ່າຝາກລູກ.

Washington State
Department of Social
& Health Services

*Transforming lives*

DSHS 22-1790 LA (12/18) Laotian



## ເຮັດໃຫ້ຊຸມນຸມຊົນ ຂອງທ່ານເຂັ້ມແຂງຂື້ນ ໂດຍການກາຍເປັນ ຜູ້ບໍຣິການຂອງຣັດຖະບານ ກາງຫລືຜູ້ບໍຣິການຍ່ອຍ

## ເປັນຫຍັງພວກເຮົາຈຶ່ງຕ້ອງການຄວາມຊ່ວຍເຫລືອຂອງທ່ານ?

ໂດຍປາສຈາກໃບຂັບຂີ່ຣົດ,ບ່ອນຢູ່ອາສັຍ,ຫລືຄ່ານ້ຳຄ່າໄຟແລະການບໍຣິການ,ພໍ່ແມ່ບໍ່ສາມາດທີ່ຈະເບິ່ງແຍງຄອບຄົວຂອງເຂົາເຈົ້າໄດ້ຢ່າງເປັນຜົນດີແລະໄປຫາບ່ອນນັ້ນບ່ອນນີ້ໄດ້ເຊັ່ນວ່າໂຮງຮຽນ,ຫມາຍນັດຫມໍ,ການສຳພາດວຽກງານຫລືວັນທຳອິດໃນວຽກງານໃຫມ່ຂອງເຂົາເຈົ້າ.

ພວກເຮົາຮູ້ຈັກວ່າມັນສາມາດໃຊ້ຊັບພະຍາກອນແລະເພື່ອນຮ່ວມງານຢູ່ໃນຊຸມນຸມຊົນຫລາຍໆບ່ອນ,ທີ່ກຳລັງເຮັດວຽກຮ່ວມກັນຢູ່ເພື່ອຈະເອົາການອູ້ມຊູທີ່ຕ້ອງການໃຫ້.ການກາຍເປັນຜູ້ບໍຣິການຂອງຣັດຖະບານກາງຫລືຮ້ານຄ້າຂາຍຍ່ອຍ/ກິຈການນຳກົມDSHSເປັນທົນທາງນຶ່ງທີ່ທ່ານສາມາດຊ່ວຍເຫລືອໃຫ້ການບໍຣິການແລະຮັບເອົາການຈ່າຍເງິນ.

## ທ່ານສາມາດຊ່ວຍເຫລືອຫຍັງໄດ້ແດ່?

ຫ້ອງການຣັດຖະບານ,ກິຈການຄ້າແລະຮ້ານຄ້າຍ່ອຍສາມາດຊ່ວຍເຫລືອໄດ້ໂດຍການຮັບເອົາໃບແລກເອົາເງິນຈາກຣັດວໍຊິງຕັນວ່າເປັນແບບຟອມຂອງການຈ່າຍເງິນທີ່ຮັບເອົາໄດ້ສຳລັບຜະລິດທະພັນ,ການບໍຣິການຫລືການປັບໄຫມ.ໂດຍການຮັບເອົາໃບແລກເອົາເງິນ,ທ່ານຊ່ວຍຄອບຄົວຢູ່ໃນຊຸມນຸມຊົນຂອງທ່ານໃຫ້ໄດ້ຮັບສິ່ງຂອງຫລືການບໍຣິການທີ່ຕ້ອງການເພື່ອຈະບັນລຸຜົນສຳເຣັດໃນຂະນະທີ່ເບິ່ງແຍງຄອບຄົວຂອງເຂົາເຈົ້າ.ການດຳເນີນການແມ່ນສະບາຍແລະງ່າຍໆ.ຈົດຊື່ດຽວນີ້!

## ຜູ້ບໍຣິການແມ່ນຫຍັງ?

ເພື່ອວ່າຈະໄດ້ຮັບການຈ່າຍເງິນສຳລັບຜະລິດທະພັນ,ການບໍຣິການຫລືການປັບໄຫມ,ທ່ານຕ້ອງໄດ້ລົງທະບຽນເພື່ອຈະເປັນຜູ້ບໍຣິການນຳໂຕະຜູ້ອອກຊີ່ຈ່າຍເງິນທົ່ວຣັດ.ເມື່ອໄດ້ລົງທະບຽນແລ້ວ,ທ່ານຈະຖືກອະນຸມັດໃຫ້ໄດ້ຮັບການຈ່າຍເງິນຈາກຣັດ.ເມື່ອເວລາທ່ານລົງທະບຽນທ່ານຈະເລືອກເອົາທີ່ຈະໃຫ້ການຈ່າຍເງິນຖືກໂອນເຂົ້າໃສ່ບັນຊີທະນາຄານຂອງທ່ານໂດຍກົງໂລດຫລືຖືກສົ່ງໄປໃຫ້ທ່ານເປັນເຊັກເງິນ.



## ຈະກາຍເປັນຜູ້ບໍຣິການໄດ້ແນວໃດ?

ມັນງ່າຍໆທີ່ຈະກາຍເປັນຜູ້ບໍຣິການ.ທ່ານສາມາດຍື່ນໃບຟອມຫລືຂຽນປະກອບທາງອອນລາຍນ໌.

- ດາວໂຫລດໃບຟອມຢູ່ທີ່ https://des.wa.gov/services/contracting-purchasing/doing-business-state/receiving-payment-state ແລະສົ່ງເຂົ້າມາຫລືແຟກຊ໌ເຂົ້າມາ.
- ລູກຄ້າຂອງຣັດຖະບານສາມາດລົງທະບຽນທາງອອນລາຍນ໌ນຳ Electronic Business Solution ຂອງຣັດວໍຊິງຕັນໄດ້ທີ່ https://fortress.wa.gov/ga/webscust/
- ກິຈການຄ້າ/ຮ້ານຄ້າຍ່ອຍສາມາດລົງທະບຽນທາງອອນລາຍນ໌ນຳ Electronic Business Solution ຂອງຣັດວໍຊິງຕັນໄດ້ທີ່ https://fortress.wa.gov/ga/webs/

## ອັນນີ້ຈະມີຜົນປະໂຍດໃຫ້ທ່ານແນວໃດ

ມັນມີຜົນປະໂຍດຫລາຍໆຢ່າງໃນການກາຍເປັນຜູ້ບໍ່ຣິການຂອງຣັດຖະບານຫລືຜູ້ບໍຣິການຍ່ອຍ,ລວມທັງ:

- ການເພີ້ມຂື້ນໃນກິຈການຄ້າ
- ບັນຊີທີ່ຍາກທີ່ຈະເກັບເອົາເງິນນຳສາມາດຖືກຈ່າຍເງິນໃຫ້.
- ງົບປະມານຣາຍໄດ້ຫລາຍກວ່າສຳລັບຜູ້ຈ່າຍເງິນພາສີທ້ອງຖິ່ນ.
- ເຮັດໃຫ້ຊຸມນຸມຊົນຂອງທ່ານເຂັ້ມແຂງຂື້ນໂດຍການຊ່ວຍເຫລືອຄອບຄົວໃຫ້ສຳເຣັດຜົນ.